ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກອງທຶນຫຼຸດຜ່ອນຄວາມທຸກຍາກ

ເລກທີ 0292/ທລຍ
ນະຄອນຫຼວງວຽງຈັນ, ວັນທີ 12 MAY 2023

# ບົດລາຍງານ

**ຮຽນ: ທ່ານລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ທີ່ເຄົາລົບ ແລະ ນັບຖື.**

**ເລື່ອງ: ລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳ 06 ເດືອນຕົ້ນປີ 2023 ແລະ ແຜນວຽກຈຸດສຸມ ປະຈຳ 06 ເດືອນທ້າຍປີ 2023 ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ.**

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ສະບັບເລກທີ 2723/ກປ, ລົງວັນທີ 27 ພຶດສະພາ 2022;
- ອີງຕາມ ໜັງສືແຈ້ງການ ຂອງຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ 06 ເດືອນຕົ້ນປີ 2023 ແລະ ຄາດຄະເນທິດທາງແຜນການ 06 ເດືອນທ້າຍປີ 2023 ສະບັບເລກທີ 1157/ຫກ, ລົງວັນທີ 03 ພຶດສະພາ 2023.

ກອງທຶນຫຼຸດຜ່ອນຄວາມທຸກຍາກ ຂໍຖືເປັນກຽດຮຽນລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳ 06 ເດືອນຕົ້ນປີ 2023 ແລະ ແຜນວຽກຈຸດສຸມ 06 ເດືອນທ້າຍປີ 2023 ຊຶ່ງມີລາຍລະອຽດລຸ່ມນີ້:

## ພາກທີ I
## ສະຫຼຸບການຈັດຕັ້ງປະຕິບັດວຽກງານ 06 ເດືອນຕົ້ນປີ 2023

### 1.1 ສະພາບພົ້ນເດັ່ນ

- ສຳເລັດຈັດກອງປະຊຸມສະພາບໍລິຫານ ກອງທຶນຫຼຸດຜ່ອນຄວາມທຸກຍາກ ປະຈຳປີ 2022 ໃນຄັ້ງວັນທີ 18 ກຸມພາ 2023 ທີ່ເມືອງໄຊ ແຂວງອຸດົມໄຊ ໂດຍການເປັນປະທານ ຂອງ ທ່ານ ປອ. ເພັດ ພົມພິພັກ, ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ປະທານສະພາບໍລິຫານ ທລຍ ແລະ ມີບັນດາກຳມະການ ສະພາບໍລິຫານ ທລຍ ທີ່ມາຈາກກະຊວງ, ອົງການທຽບເທົ່າກະຊວງ ແລະ ບັນດາແຂວງເປົ້າໝາຍຂອງໂຄງການ ທລຍ ເຂົ້າຮ່ວມ ເພື່ອຮັບຮອງເອົາຂໍ້ສະເໜີ ແລະ ແຜນວຽກໃນຕໍ່ໜ້າ ເປັນຕົ້ນແມ່ນການຂະຫຍາຍໄລຍະເວລາຂອງການຈັດຕັ້ງປະຕິບັດໂຄງການ ທລຍ 3 ໄລຍະເພີ່ມທຶນ ອີກ 1 ປີ ໄປຮອດ ເດືອນມິຖຸນາ 2025 ແລະ ຮັບຮອງເອົາໂຄງການໃໝ່ (ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຫຼື CLEAR).
- ສຳເລັດການທົບທວນກາງສະໄໝ ການຈັດຕັ້ງປະຕິບັດ ໂຄງການ ທລຍ 3 ໄລຍະເພີ່ມທຶນ ແຕ່ປີ 2020 ຫາ 2022 ຊຶ່ງເປັນການທົບທວນຜົນສຳເລັດ ແລະ ບັນດາວຽກງານທີ່ຕ້ອງເອົາໃຈໃສ່ໃນໄລຍະເຄິ່ງທ້າຍສະໄໝຂອງໂຄງການ.
- ສຳເລັດການກະກຽມການຈັດຕັ້ງປະຕິບັດໂຄງການ ທລຍ 3 ໄລຍະເພີ່ມທຶນ ໃນບ້ານເປົ້າໝາຍຊຸດ 2 ຈຳນວນ 237 ບ້ານ ໃນ 12 ເມືອງ 4 ແຂວງເປົ້າໝາຍ ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ຊຶ່ງໄດ້ສຳເລັດຈັດກອງປະຊຸມແນະນຳໂຄງການ ແລະ ວາງແຜນພັດທະນາບ້ານ, ສຳເລັດສ້າງຕັ້ງກຸ່ມຊ່ວຍເຫຼືອກັນ (ກຊກ) ແລະ ກຸ່ມໂພຊະນາການ (ກພກ) ໄປພ້ອມກັບການສ້າງຄວາມເຂັ້ມແຂງຕ່າງໆ.
- ສຳເລັດການກະກຽມໂຄງການໃໝ່ ຄື: ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (CLEAR) ຊຶ່ງມາຮອດປະຈຸບັນ ຄະນະກະກຽມໂຄງການ ຂອງກະຊວງກະສິກຳ ແລະ ປ່າໄມ້ ໂດຍສົມ

ທົບທັບທີມງານຊ່ຽວຊານຂອງທະນາຄານໂລກ ແລະ ພາກສ່ວນກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ສໍາເລັດ ເອກະສານສໍາຄັນ ເພື່ອນໍາໃຊ້ເຂົ້າໃນການເຈລະຈາ ແລະ ເຊັນສັນຍາໂຄງການ ລະຫວ່າງລັດຖະບານ ແລະ ຜູ້ໃຫ້ທຶນ, ໃນນັ້ນ ປະກອບມີ ເອກະສານໂຄງການ (ທີ່ກໍານົດພື້ນທີ່ເປົ້າໝາຍ, ອົງປະກອບ ແລະ ກິດຈະກໍາ ຂອງໂຄງການ), ຂອບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ; ແລະ ໄດ້ສໍາເລັດທົບທວນຄືນ ແລະ ການປະເມີນການກະກຽມໂຄງການຄັ້ງສຸດທ້າຍ ໃນເດືອນເມສາ 2023 ແລະ ການເຈລະຈາຮັບເອົາໂຄງການ ໃນເດືອນພຶດສະພາ 2023.

- ສໍາເລັດນໍາພາຄະນະທີມງານຊີ້ນໍາໂຄງການສົ່ງເສີມຊີວິດການເປັນຢູ່ (LEAP) ຈາກປະເທດກໍາປູເຈຍ ຈໍານວນ 17 ທ່ານ ມາຖອດຖອນບົດຮຽນກ່ຽວກັບ ຮູບແບບການຈັດຕັ້ງປະຕິບັດວຽກງານຂອງ ທລຍ ຢູ່ແຂວງອຸດົມໄຊ ແລະ ແຂວງຜົ້ງສາລີ ໃນລະຫວ່າງ ວັນທີ 14-17 ມີນາ 2023.

### 1.2 ການຈັດຕັ້ງປະຕິບັດໂຄງການ ທລຍ 3 ໄລຍະເພີ່ມທຶນ

ປະຈຸບັນ ກອງທຶນຫຼຸດຜ່ອນຄວາມທຸກຍາກ ກໍາລັງຈັດຕັ້ງປະຕິບັດ ໂຄງການ ທລຍ 3 ໄລຍະເພີ່ມທຶນ ຊຶ່ງໄດ້ຮັບການສະໜັບສະໜູນເງິນກູ້ຢືມຈາກທະນາຄານໂລກ ຈໍານວນ 22,5 ລ້ານໂດລາສະຫະລັດ ນັບຕັ້ງແຕ່ປີ 2020-2024; ເປັນໂຄງການ ທີ່ຫັນປ່ຽນການສະໜັບສະໜູນທີ່ເນັ້ນໃສ່ການປັບປຸງພື້ນຖານໂຄງລ່າງຂະໜາດນ້ອຍ (ເສັ້ນທາງ, ໂຮງຮຽນ, ສຸກສາລາ, ນໍ້າຊົມໄຊ້ຂັ້ນຊຸມຊົນ, ຊົນລະປະທານ, ...) ມາເປັນການຊ່ວຍເຫຼືອດ້ານການປັບປຸງຊີວິການເປັນຢູ່ ແລະ ສົ່ງເສີມໂພຊະນາການ ໃນລະດັບຄົວເຮືອນ ໃນນັ້ນ ກໍຍັງມີການສະໜັບສະໜູນດ້ານພື້ນຖານໂຄງລ່າງຂະໜາດນ້ອຍທີ່ຕິດພັນກັບການສົ່ງເສີມການຜະລິດດ້ານກະສິກໍາ ແລະ ໂພຊະນາການ ເປັນຕົ້ນ ການກໍ່ສ້າງ ແລະ ສ້ອມແປງຊົນລະປະທານ, ຝາຍກັ້ນນໍ້າຂະໜາດນ້ອຍ, ການປົວແປງເສັ້ນທາງຊົນນະບົດຫາເຂດການຜະລິດ, ຕະຫຼາດຊຸມຊົນ ໂດຍເນັ້ນໃສ່ໜ້າວຽກທີ່ຊາວບ້ານສາມາດຈັດຕັ້ງປະຕິບັດເອງເປັນຫຼັກ; ໄດ້ຈັດຕັ້ງປະຕິບັດວຽກງານຢູ່ 468 ບ້ານເປົ້າໝາຍ ໃນ 12 ເມືອງ 4 ແຂວງ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ) ກວມເອົາປະຊາກອນທັງໝົດ 222.590 ຄົນ ແລະ ຫຼາຍກວ່າ 75% ເປັນຊົນເຜົ່າທີ່ບໍ່ນອນໃນກຸ່ມລາວ-ໄຕ. ການຈັດຕັ້ງປະຕິບັດວຽກງານ ຂອງໂຄງການດັ່ງກ່າວ ໃນ 06 ເດືອນຕົ້ນປີ 2023 ມີດັ່ງລຸມນີ້:

#### 1.2.1 ວຽກງານປັບປຸງພື້ນຖານໂຄງລ່າງຂອງຊຸມຊົນ

- ສໍາເລັດການສ້າງແຜນພັດທະນາບ້ານ (ນໍາໃຊ້ຮູບແບບການວາງແຜນຂັ້ນທ້ອງຖິ່ນມີສ່ວນຮ່ວມ ຂອງກະຊວງແຜນການ ແລະ ການລົງທຶນ) ຢູ່ 237 ບ້ານເປົ້າໝາຍຊຸດທີ 2 ແຕ່ປີ 2023 ຫາ 2025 ໂດຍເນັ້ນໃສ່ການມີສ່ວນຮ່ວມຂອງປະຊາຊົນ ແລະ ສະໜອງໂຄງລ່າງທີ່ສາມາດເຊື່ອມສານກັບວຽກງານປັບປຸງຊີວິດການເປັນຢູ່ ແລະ ໂພຊະນາການ. ສ່ວນບູລິມະສິດອື່ນໆ ທີ່ບໍ່ນອນໃນຄວາມຮັບຜິດຊອບຂອງ ໂຄງການ ທລຍ 3 ໄລຍະເພີ່ມທຶນ ເຊັ່ນ: ວຽກງານສຶກສາ, ສາທາລະນາສຸກ, ພະລັງງານ ແມ່ນສາມາດນໍາໃຊ້ເປັນບ່ອນອີງໃນການວາງແຜນພັດທະນາ ແລະ ລະດົມທຶນຮອນຈາກຄູ່ຮ່ວມພັດທະນາອື່ນໆ.
- ສໍາເລັດການຈັດຕັ້ງປະຕິບັດ 173 ກິດຈະກໍາຍ່ອຍກ່ຽວກັບກໍ່ສ້າງພື້ນຖານໂຄງລ່າງຂັ້ນຊຸມຊົນ ໃນບ້ານເປົ້າໝາຍຊຸດ 1 ທີ່ມີມູນຄ່າທັງໝົດ 24,41 ຕື້ກີບ, ເປັນທຶນປະກອບສ່ວນຂອງຊຸມຊົນ 2,57 ຕື້ກີບ (11%). ໂຄງການກໍ່ສ້າງພື້ນຖານໂຄງລ່າງເຫຼົ່ານີ້ ໄດ້ອໍານວຍຄວາມສະດວກໃຫ້ແກ່ປະຊາກອນຫຼາຍກວ່າ 75.000 ຄົນ, ໃນນີ້ເປັນຊົນເຜົ່າທີ່ບໍ່ຢູ່ໃນກຸ່ມລາວ-ໄຕ ຫຼາຍກວ່າ 83%. ການກໍ່ສ້າງ ໄດ້ນໍາໃຊ້ຮູບແບບຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ (CFA) ໂດຍຊາວບ້ານເປັນຜູ້ຈັດຕັ້ງປະຕິບັດເອງ ແລະ ຈ້າງແຮງງານທີ່ມາຈາກຄອບທຸກຍາກພາຍໃນບ້ານ ເພື່ອໃຫ້ເຂົາເຈົ້າມີລາຍຮັບ ແລະ ສ້າງຄວາມເປັນເຈົ້າການ ເພື່ອຮັບປະກັນຄວາມຍືນຍົງ.
- ກ່ອນມອບຮັບໂຄງການຍ່ອຍກໍ່ສ້າງພື້ນຖານໂຄງລ່າງ ໃຫ້ກັບຊາວບ້ານ ໄດ້ຈັດຕັ້ງກຸມຄຸ້ມຄອງນໍາໃຊ້ ແລະ ສ້ອມແປງຂັ້ນບ້ານ (ຢ່າງໜ້ອຍ 9 ຄົນຕໍ່ບ້ານ) ພ້ອມທັງຈັດຝຶກອົບຮົມຄຸ້ມຄອງນໍາໃຊ້ ໃຫ້ທຸກໆບ້ານທີ່ໄດ້ຮັບໂຄງການຍ່ອຍກ່ຽວກັບການກໍ່ສ້າງ ແລະ ສ້ອມແປງ. ເປົ້າໝາຍເພື່ອໃຫ້ເຂົາເຈົ້າ ເຂົ້າໃຈ ແລະ ສາມາດວາງແຜນຕິດຕາມ-ກວດກາ, ຈັດຕັ້ງປະຕິບັດ ແລະ ບໍລິຫານຄຸ້ມຄອງນໍາໃຊ້ ແລະ ບູລະນະສ້ອມແປງ ດ້ວຍເຂົາເຈົ້າເອງ.
- ສໍາເລັດການເບີກຈ່າຍງົບປະມານສໍາລັບໂຄງການຍ່ອຍຂອງບ້ານເປົ້າໝາຍຊຸດ 1 (231 ບ້ານ) ແລະ ຈະສືບຕໍ່ເລັ່ງການເບີກຈ່າຍງົບປະມານງວດທີ 2 ທີ່ຍັງຄ້າງ 19 ໂຄງການຍ່ອຍ ໃຫ້ສໍາເລັດໃນເດືອນກໍລະກົດ 2023.

- ສໍາລັບບ້ານເປົ້າໝາຍຊຸດ 2 (237 ບ້ານ) ໃນຕົ້ນປີ 2023 ກໍາລັງຢູ່ຂັ້ນຕອນການທົບທວນແຜນຂັ້ນບ້ານ ເພື່ອຄັດເລືອກໂຄງການຍ່ອຍ ທີ່ຕິດພັນກັບວຽກງານກະສິກໍາ ເປັນຕົ້ນການປູກ-ການລ້ຽງ ແລະ ການສ້າງລາຍຮັບຕ່າງໆ ຫຼັງຈາກມີການຮັບຮອງໂຄງການແລ້ວ ຈະລົງສໍາຫຼວດ-ອອກແບບ.

### 1.2.2 ວຽກງານປັບປຸງຊີວິດການເປັນຢູ່

- ວຽກງານປັບປຸງຊີວິດການເປັນຢູ່ ມີເປົ້າໝາຍເພື່ອໃຫ້ປະຊາຊົນຈາກຄອບຄົວທຸກຍາກ, ຜູ້ດ້ອຍໂອກາດ ແລະ ຂາດຫຼັກຊັບ ໃນບ້ານເປົ້າໝາຍ ໄດ້ເຂົ້າເຖິງແຫຼ່ງທຶນ, ມີການປຶກສາຫາລືວຽກງານຕ່າງໆຜ່ານກອງປະຊຸມໃນແຕ່ລະເດືອນ, ສ້າງຄວາມສາມັກຄີພາຍໃນບ້ານ, ທັງເປັນການສົ່ງເສີມເຕັກນິກໃນການປູກຝັງ, ລ້ຽງສັດ, ການຕໍ່າຫູກ ແລະ ກິດຈະກໍາສ້າງລາຍຮັບຕ່າງໆ ອີງຕາມທ່າແຮງຂອງແຕ່ລະທ້ອງຖິ່ນ. ວຽກງານດັ່ງກ່າວໄດ້ດໍາເນີນໄປທັງດ້ານການເມືອງແນວຄິດ ແລະ ຍົກສູງເສດຖະກິດຄອບຄົວ ຈຶ່ງເຮັດໃຫ້ປະຊາຊົນ ເຊື່ອໝັ້ນ ແລະ ເຂົ້າຮ່ວມກິດຈະກໍາຂອງໂຄງການ.
- ອີງຕາມແຜນສູ້ຊົນ 06 ເດືອນຕົ້ນປີ 2023 ທລຍ ໄດ້ສະໜັບສະໜູນເງິນຕົ້ນທຶນໃຫ້ແກ່ 2.051 ກຸ່ມຊ່ວຍເຫຼືອກັນ (ກຊກ) ໃນບ້ານເປົ້າໝາຍຊຸດ 1 ແລະ 2 ໃນ 12 ເມືອງ 4 ແຂວງ ຈໍານວນ 33.3 ຕື້ກີບ ໂດຍປ່ອຍກູ້ໃຫ້ສະມາຊິກ ກຊກ ຈໍານວນ 14.285 ເທື່ອຄົນ ເປັນເງິນ 27 ຕື້ກີບ (81%).
- ຄະນະກໍາມະການບໍລິຫານ ກຊກ (ຄບກ) ທີ່ມີທັງໝົດ 2.481 ຄົນ, ເປັນຍິງ 2.010 ຄົນ (81%) ໄດ້ເຄື່ອນໄຫວໜ້າທີ່ຂອງຕົນ ແລະ ຕິດຕາມເປັນປົກກະຕິ ຊຶ່ງສາມາດປຸກລະດົມເງິນຝາກຈາກສະມາຊິກ ກຊກ ໃນເວລາຈັດກອງປະຊຸມ ກຊກ 2 ຄັ້ງຕໍ່ເດືອນ ຈໍານວນ 5,6 ຕື້ກີບ ແລະ ສາມາດປ່ອຍກູ້ໃຫ້ສະມາຊິກ 3,3 ຕື້ກີບ (58.92%).
- ໄດ້ຕິດຕາມສະພາບການກ່ຽວກັບການກູ້ຢືມທຶນ ເພື່ອເຮັດກິດຈະກໍາຕ່າງໆ, ສ່ວນໃຫຍ່ສະມາຊິກ ກຊກ ໄດ້ມີຄວາມກະຕືລືລົ້ນໃນການກູ້ຢືມເງິນໄປເຮັດກິດຈະກໍາສ້າງລາຍຮັບຫຼາຍຂຶ້ນ ເປັນຕົ້ນແມ່ນ ການລ້ຽງສັດ (ສັດປີກ, ໝູ, ແບ້, ປາໃນໜອງ, ກົບ); ການປູກຜັກ ແລະ ພືດເສດຖະກິດ (ສາລີ, ມັນຕົ້ນ, ກ້ວຍ, ແຂມ, ເຫັດ, ຂີງ ແລະ ຂ່າ), ຫັດຖະກໍາ (ຕໍ່າຫູກ, ຈັກສານ), ປູກມອນ-ລ້ຽງມ້ອນ, ແລະ ຄ້າຂາຍຍ່ອຍ.
- ປະເມີນຄວາມເຂັ້ມແຂງຂອງຊາວບ້ານ ໂດຍສະເພາະບັນດາກຸ່ມ ກຊກ ແລະ ຄະນະບໍລິຫານ ກຊກ ຂັ້ນບ້ານ ໃນບັນດາບ້ານເປົ້າໝາຍຊຸດ 1 ກ່ອນມອບຮັບກິດຈະກໍາໃຫ້ທ້ອງຖິ່ນ ເປັນຜູ້ສືບຕໍ່ຊຸກຍູ້ແທນພະນັກງານ ທລຍ ຂັ້ນບ້ານທີ່ຈະຢຸດເຊົາການປະຈໍາການຢູ່ບັນດາບ້ານເປົ້າໝາຍຊຸດ 1 ແລະ ຫັນໄປປະຈໍາການຢູ່ບ້ານເປົ້າໝາຍຊຸດ 2.
- ສໍາລັບບ້ານເປົ້າໝາຍຊຸດ 2 ຈໍານວນ 237 ບ້ານ ມີທັງໝົດ 1.044 ກຊກ ທີ່ໄດ້ຮັບການອະນຸມັດສ້າງຕັ້ງແລ້ວ ແລະ ໄດ້ມີການຝາກເງິນຂອງສະມາຊິກ ກຊກ 1,3 ຕື້ກີບ ແລະ ໄດ້ປ່ອຍໃຫ້ກູ້ຢືມ 137 ລ້ານກີບ. ສໍາລັບກິດຈະກໍາການກູ້ຢືມເງິນຈາກເງິນຕົ້ນທຶນ ທີ່ສະໜອງໂດຍໂຄງການ ທລຍ 3 ໄລຍະເພີ່ມທຶນ ແມ່ນກໍາລັງຢູ່ໃນຂັ້ນຕອນລິເລີ່ມໃຫ້ສະມາຊິກ ກຊກ ກູ້ຢືມເພື່ອໄປຈັດຕັ້ງປະຕິບັດກິດຈະກໍາສ້າງລາຍຮັບ.
- ມາຮອດເດືອນພຶດສະພາ 2023 ສາມາດສ້າງກຸ່ມຜະລິດ ໄດ້ 33 ກຸ່ມ; ໃນນີ້ 15 ກຸ່ມ ຢູ່ແຂວງອຸດົມໄຊ ແລະ 18 ກຸ່ມ ຢູ່ແຂວງຊຽງຂວາງ ໄດ້ເຄື່ອນໄຫວຢ່າງເປັນປົກກະຕິ ແລະ ສາມາດສ້າງລາຍຮັບໄດ້ ລວມທັງສາມາດຈ່າຍດອກເບ້ຍ ໃຫ້ແກ່ທະນາຄານນະໂຍບາຍ ໄດ້ຢ່າງເປັນປົກກະຕິ. ກຸ່ມຜູ້ຜະລິດ ປະກອບມີ ກຸ່ມລ້ຽງສັດ 24 ກຸ່ມ (ກຸ່ມລ້ຽງໝູ, ໄກ່, ແບ້, ປາ) ແລະ ກຸ່ມຫັດຖະກໍາ 9 ກຸ່ມ (ກຸ່ມຕໍ່າຫູກ) ແລະ ມີສະມາຊິກທັງໝົດ 393 ຄົນ, ຍິງ 334 ຄົນ (84.99%) ແລະ ຊົນເຜົ່າ 95 ຄົນ (24.17%).

### 1.2.3 ວຽກງານສົ່ງເສີມໂພຊະນາການ

- ໄລຍະ 06 ເດືອນຕົ້ນປີ 2023 ທລຍ ໄດ້ສຸມໃສ່ວຽກງານການປ່ຽນແປງພຶດຕິກໍາໃນການບໍລິໂພກອາຫານຂອງຊາວບ້ານໃນກຸ່ມເປົ້າໝາຍແມ່ ແລະ ເດັກ 1000 ວັນ ເປັນຕົ້ນການປຸງແຕ່ງອາຫານທີ່ມີໂພຊະນາການ, ການຢ້ຽມຢາມສວນຄົວຂອງສະມາຊິກ ແລະ ການສ້າງວີດີໂອກ່ຽວກັບວຽກງານໂພຊະນາການຂອງ ແມ່ ແລະ ເດັກ 1000 ວັນ ຊຶ່ງໄດ້ສອດຄ່ອງກັບຍຸດທະສາດໂພຊະນາການແຫ່ງຊາດ.
- ນອກນັ້ນ ຍັງມີກິດຈະກໍາທົດລ້ຽງເບ້ຍເອົານົມ ເພື່ອສົ່ງເສີມໂພຊະນາການຂອງເດັກໃນອາຍຸ 6-23 ເດືອນ ທີ່ເປັນກຸ່ມເປົ້າໝາຍຂອງໂຄງການ ຊຶ່ງໄດ້ຈັດຕັ້ງປະຕິບັດຢູ່ 8 ບ້ານ ຂອງເມືອງນາໝໍ້ ແຂວງອຸດົມໄຊ ແລະ 8 ບ້ານ ຂອງເມືອງຄໍາ ແຂວງຊຽງຂວາງ.

- ກຸ່ມໂພຊະນາການບ້ານ (ກພກ) ໄດ້ຈັດກອງປະຊຸມໃຫ້ຄວາມຮູ້ ເພື່ອປ່ຽນແປງຄວາມຊິນເຄີຍ ແລະ ພຶດຕິກຳທາງດ້ານໂພຊະນາການ (SBCC) ຈຳນວນ 13.787 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 500.139 ເທື່ອຄົນ ໂດຍນຳໃຊ້ງົບປະມານທັງໝົດ 1.362.756.856 ກີບ, ໃນນັ້ນ ທຶນຊຸມຊົນປະກອບສ່ວນ 298.302.678 ກີບ (21,9%).
- ສະມາຊິກ ກພກ ມີທັງໝົດ 31.201 ຄົນ ໃນນັ້ນ 11.512 ຄົນ ແມ່ນໝົດສະຖານະຜູ້ໄດ້ຮັບການສະໜັບສະໜູນ ແລະ 19.689 ຄົນ ແມ່ນຜູ້ທີ່ໄດ້ຮັບຜົນປະໂຫຍດທາງກົງ ແລະ ທາງອ້ອມ ທີ່ຍັງເຄື່ອນໄຫວເຂົ້າຮ່ວມກິດຈະກຳ ກພກ ແລະ ໃນນັ້ນ 11.322 ຄົນ ແມ່ນຜູ້ໄດ້ຮັບຜົນປະໂຫຍດໂດຍກົງ ປະກອບມີ ແມ່ຖືພາ 2.727 ຄົນ, ແມ່ລູກອ່ອນ 1.584 ຄົນ ແລະ ເດັກອາຍຸ 6-23 ເດືອນ 7.011 ຄົນ ແລະ 8.367 ຄົນ ແມ່ນຜູ້ໄດ້ຮັບຜົນປະໂຫຍດທາງອ້ອມ ປະກອບມີ ເດັກອາຍຸ 0-5 ເດືອນ 1.580 ຄົນ ແລະ ແມ່ຂອງເດັກ 6-23 ເດືອນ 6.787 ຄົນ.
- ສຳເລັດຝຶກອົບຮົມການເປັນຄູຝຶກ (TOT) ວຽກງານສອນຄົວໂພຊະນາການ ໃຫ້ແກ່ພະນັກງານວິຊາການຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພະນັກງານໂພຊະນາການ ທລຍ ຂັ້ນເມືອງ ແລະ ຂັ້ນບ້ານ ຊຶ່ງໄດ້ຈັດຂຶ້ນຢູ່ຂັ້ນແຂວງ ຢູ່ 4 ແຂວງເປົ້າໝາຍຂອງໂຄງການ ແລະ ສຳເລັດຝຶກອົບຮົມ ໃຫ້ຄວາມຮູ້ພື້ນຖານ ວຽກງານໂພຊະນາການ ແລະ ການເຮັດສອນຄົວໂພຊະນາການ ໃຫ້ແກ່ ຄະນະ ກພກ ບ້ານເປົ້າໝາຍຊຸດ 2 ຈຳນວນ 237 ບ້ານ.
- ໄດ້ຕິດຕາມຊຸກຍູ້ໃນການແຕ່ງອາຫານໃຫ້ແກ່ສະມາຊິກ ກພກ ບ້ານເປົ້າໝາຍຊຸດ 1 ແລະ 2 ເປັນປົກກະຕິ ແລະ ຕິດຕາມ ແລະ ນຳພາຂັ້ນບ້ານ ຢ້ຽມຢາມສອນຄົວ ແລະ ຢ້ຽມຢາມຄົວເຮືອນສະມາຊິກ ກພກ; ຊຸກຍູ້ໃຫ້ຊຸມຊົນບ້ານເປົ້າໝາຍໂຄງການ ສ້າງຄລິບວິດີໂອ ກ່ຽວກັບການສົ່ງເສີມໂພຊະນາການ ເພື່ອແລກປ່ຽນບົດຮຽນ ລະຫວ່າງຊຸມຊົນດ້ວຍກັນ ໄດ້ທັງໝົດ 606 ເລື່ອງ.
- ຂະຫຍາຍກິດຈະກຳຣິດນິມແບ້ເພື່ອປຸງແຕ່ງອາຫານ ຕື່ມອີກ 10 ບ້ານ ຢູ່ເມືອງນາໝໍ້ ແຂວງອຸດົມໄຊ ແລະ 10 ບ້ານຢູ່ເມືອງຄຳ ແຂວງຊຽງຂວາງ.

1.2.4 ວຽກງານບໍລິຫານ ແລະ ການເງິນ

ວຽກງານການເງິນ, ຈັດຊື້ ແລະ ບຸກຄະລາກອນ

- ສຳເລັດການກວດສອບຈາກຫຼາຍພາກສ່ວນ ເພື່ອຮັບປະກັນວ່າການນຳໃຊ້ງົບປະມານ ຖືກຕ້ອງ ແລະ ສອດຄ່ອງກັບແຜນ ທັງຮັບປະກັນສິດຜົນປະໂຫຍດສູງສຸດຂອງປະຊາຊົນບັນດາເຜົ່າ ປະກອບມີ ການກວດສອບຂອງຊ່ຽວຊານການເງິນຈາກທະນາຄານໂລກ ກ່ອນການມາທົບທວນກາງສະໄໝຂອງຜູ້ໃຫ້ທຶນ, ການກວດສອບຈາກບໍລິສັດທາງນອກ ແລະ ການກວດສອບຈາກອົງການກວດສອບແຫ່ງລັດ.
- ສຳເລັດການກວດກາ ແລະ ໂອນງົບປະມານຕ່າງໆ ຈາກສູນກາງ ໄປໃຫ້ 12 ເມືອງ ຂອງ 4 ແຂວງ ເປົ້າໝາຍ.
- ສຳເລັດການກວດກາເອກະສານທາງດ້ານການເງິນ ກ່ອນການກວດສອບພາຍນອກ ປະຈຳສົກປີ 2022.
- ສຳເລັດການສະຫຼຸບບົດລາຍງານການເງິນ ປະຈຳໄຕມາດ 4 (ຕຸລາ-ທັນວາ 2022) ແລະ ສັງລວມແຜນ ປະຈຳໄຕມາດ 1 (ມັງກອນ-ມີນາ 2023) ໃຫ້ແກ່ຜູ້ໃຫ້ທຶນ.
- ການໃຊ້ຈ່າຍງົບປະມານປີ 2023 ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ມາຮອດ 15 ພຶດສະພາ 2023 ມີດັ່ງນີ້:

| ວຽກງານ | ງົບປະມານ ສຳລັບປີ 2023 (USD) | ການໃຊ້ຈ່າຍ ຮອດເດືອນ ພຶດສະພາ 2023 (USD) | ເປີເຊັນຂອງການ ໃຊ້ຈ່າຍ (%) |
|---|---|---|---|
| ພັດທະນາຊຸມຊົນ ແລະ ການກໍ່ສ້າງໂຄງລ່າງພື້ນຖານ | 3.798.400 | 120.400 | 3 |
| ພັດທະນາຊຸມຊົນ ແລະ ສ້າງຄວາມເຂັ້ມແຂງ | 436.400 | 36.100 | 8 |
| ບໍລິຫານໂຄງການ | 708.800 | 385.100 | 54 |
| ປັບປຸງຊີວິດການເປັນຢູ່ ສົ່ງເສີມສານໂພຊະນາການ | 5.666.900 | 1.787.700 | 32 |
| ລວມ | 10.610.500 | 2.329.300 | 22 |

ໝາຍເຫດ: *ຕາມແຜນປີ 2023 ງົບປະມານ ຈະຖືກນຳໃຊ້ຫຼາຍ ໃນວຽກງານປັບປຸງຊີວິດການເປັນຢູ່ ໂດຍສະເພາະການອະນຸມັດຕົ້ນທຶນໃຫ້ກັບ ກຊກ (ຢ່າງໜ້ອຍ 1.046 ກຊກ, ມີສະມາຊິກຫຼາຍກວ່າ 13.700 ຄົນ) ແລະ ກຸ່ມຜູ້ຜະລິດ ໃນບ້ານເປົ້າໝາຍຊຸດທີ 2. ນອກນັ້ນ ຍັງມີງົບປະມານສຳລັບກິດຈະກຳປັບປຸງພື້ນຖານໂຄງ*

*ລ່າງດ້ານກະສິກຳ ທີ່ສາມາດເບີກຈ່າຍໄດ້ ຫຼັງຈາກທີ່ໄດ້ເຮັດຂໍ້ຕົກລົງ ໃນການກໍ່ສ້າງລະຫວ່າງ ທລຍ ແລະ ນາຍຊ່າງຊຸມຊົນ ຄາດວ່າກ່ອນທ້າຍປີ 2023 ຈະມີການໂອນງົບປະມານດັ່ງກ່າວ ໃຫ້ກັບຊຸມຊົນ ໃນພື້ນທີ່ເປົ້າໝາຍ ທີ່ໄດ້ຮັບກິດຈະກຳ ຊຶ່ງຈະລາຍງານໃນບົດລາຍງານປະຈຳປີ 2023.*

<u>ວຽກງານຈັດຕັ້ງ ແລະ ບຸກຄະລາກອນ</u>

- ປະຈຸບັນ ທລຍ ມີພະນັກງານທັງໝົດ 198 ຄົນ, ຍິງ 81 ຄົນ (40.91%) ແລະ ຊົນເຜົ່າ 71 ຄົນ (35.86%); ໃນນັ້ນ ປະຈຳຢູ່ຂັ້ນສູນກາງ ມີ 25 ຄົນ, ຍິງ 5 ຄົນ ແລະ ປະຈຳຢູ່ຂັ້ນທ້ອງຖິ່ນ ໃນ 4 ແຂວງເປົ້າໝາຍ 12 ເມືອງ ມີ 173 ຄົນ, ຍິງ 76 ຄົນ. ໃນນັ້ນ, ມີພະນັກງານທີ່ປະຈຳຢູ່ຮາກຖານຂັ້ນບ້ານ ຈຳນວນ 130 ຄົນ (ຍິງ 64 ຄົນ, ເປັນຊົນເຜົ່າ 63 ຄົນ) ທີ່ເຮັດວຽກຕົວຈິງ ນຳພາປະຊາຊົນເຮັດກິດຈະກຳກ່ຽວກັບການປັບປຸງຊີວິດການເປັນຢູ່ ແລະ ສົ່ງເສີມດ້ານໂພຊະນາການ.

<u>ວຽກງານຂ່າວ ແລະ ສື່ສານທາງດ້ານເຕັກໂນໂລຍີໃໝ່ (ITC)</u>

- ຂຽນຂ່າວລົງເຟສບຸກ ແລະ ເວບໄຊ ທລຍ 65 ຂ່າວ, ມີຄົນກົດໄລ 3.300 ຄັ້ງ, ກົດແຊ 485 ຄັ້ງ.
- ສະໜອງຂໍ້ມູນ-ຂ່າວສານ ໃຫ້ພະແນກໂຄສະນາ ແລະ ຂໍ້ມູນ-ຂ່າວສານ, ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ລາຍການລຸງສ້າງ-ລຸງສາ, ວິທະຍຸແຫ່ງຊາດ ເປັນປົກກະຕິ.
- ສຳເລັດອອກແບບຈົດໝາຍຂ່າວ ປະຈຳໄຕມາດ 1 (ມັງກອນ-ມີນາ 2023).
- ປະສານງານກັບກຸ່ມບໍລິການດ້ານກະສິກຳ (CLICK) ສ້າງ 10 ຄລິບວີດີໂອ ກ່ຽວກັບວຽກໂພຊະນາການ ແລະ ໃຫ້ຄຳຄິດຄຳເຫັນເພື່ອປັບປຸງຄລິບວິດີໂອເຫຼົ່ານັ້ນ ໃຫ້ໄດ້ຕາມຈຸດປະສົງເປົ້າໝາຍຂອງໂຄງການ ທລຍ.

1.2.5 ວຽກງານຕິດຕາມ-ປະເມີນຜົນ

- ໃນ 06 ເດືອນຕົ້ນປີ 2023 ໄດ້ມີການປະເມີນຜົນໄດ້ຮັບຈາກຊ່ຽວຊານທາງນອກ 4 ການປະເມີນ ຄື:
  1) **ການປະເມີນຄວາມເພິ່ງພໍໃຈ** ຂອງຜູ້ໄດ້ຮັບຜົນປະໂຫຍດຕໍ່ຂະບວນການມີສ່ວນຮ່ວມໃນການວາງແຜນຂອງໂຄງການ ທລຍ, ໂດຍລວມ ຊາວບ້ານ ມີຄວາມເພິ່ງພໍໃຈຕໍ່ວຽກງານ ເພາະເຂົາເຈົ້າ ສາມາດສະແດງຄຳຄິດເຫັນ ແລະ ໄດ້ຮັບການພິຈາລະນາ ແຕ່ຍັງມີບາງບ້ານ ຍັງມີອຸປະສັກກ່ຽວກັບການສື່ສານພາສາລາວກັບຊົນເຜົ່າ ເຮັດໃຫ້ເຂົາເຈົ້າບໍ່ກ້າສະແດງອອກໃນເວລາກອງປະຊຸມຢູ່ຂັ້ນບ້ານ ແລະ ປະຊາຊົນ ຈຳນວນໜຶ່ງ ຍັງມີຄວາມເຂົ້າໃຈທີ່ຈຳກັດກ່ຽວຄວາມສຳຄັນໃນການສະແດງຄຳຄິດຄຳເຫັນຕໍ່ການຈັດຕັ້ງປະຕິບັດວຽກງານຂອງ ທລຍ ທີ່ທີມງານຕ້ອງເອົາໃຈໃສ່ໃນຕໍ່ໜ້າ.
  2) **ການປະເມີນຜົນວຽກງານກຸ່ມຊ່ວຍເຫຼືອກັນ ແລະ ກຸ່ມຜູ້ຜະລິດ** ໂດຍລວມ ກິດຈະກຳດັ່ງກ່າວ ໄດ້ສ້າງໂອກາດໃຫ້ປະຊາຊົນ ໂດຍສະເພາະຜູ້ທຸກຍາກ ສາມາດເຂົ້າເຖິງແຫຼ່ງທຶນ ເພື່ອການຜະລິດ ແລະ ກໍລະນີສຸເສີນ ຜ່ານເງິນຝາກສະມາຊິກ ທັງເປັນການຍົກສູງດ້ານເຕັກນິກທາງດ້ານກະສິກຳໃຫ້ກັບສະມາຊິກ ເພື່ອເປັນການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ຂາຍເປັນສິນຄ້າໄດ້. ແຕ່ຕ້ອງເນັ້ນການສ້າງຄວາມເຂັ້ມແຂງໃຫ້ຄະນະບໍລິການ ກຊກ ຕື່ມກ່ຽວກັບວຽກງານການເງິນຕ່າງໆ ແລະ ຄວາມສາມາໃນການຕິດຕາມ ແລະ ຄວາມຍືນຍົງຂອງກິດຈະກຳ. ສະເພາະວຽກງານກຸ່ມຜູ້ຜະລິດ ຖືວ່າເປັນການເລີ່ມຕົ້ນທີ່ດີ ແຕ່ຕ້ອງໄດ້ເນັ້ນໃສ່ ການຜະລິດທີ່ຕິດພັນກັບຕະຫຼາດ, ສ້າງຄວາມເຂັ້ມແຂງດ້ານການເງິນ ແລະ ບັນຊີ, ແລະ ຕ້ອງເນັ້ນໃສ່ກິດຈະກຳທີ່ເປັນທ່າແຮງຂອງທ້ອງຖິ່ນ.
  3) **ການປະເມີນຜົນວຽກງານໂພຊະນາການ** ໄດ້ຢັ້ງຢືນວ່າ ກິດຈະກຳດັ່ງກ່າວ ໄດ້ສ້າງການປ່ຽນແປງທາງສັງຄົມ ແລະ ການປ່ຽນແປງພຶດຕິກຳໃນການກະກຽມອາຫານ, ສຸຂະອະນາໄມ, ການບໍລິໂພກໂດຍຜ່ານການປຸງແຕ່ງຂອງຊຸມຊົນ, ການຮັບຮູ້ຂໍ້ມູນຂ່າວສານໂພຊະນາການ, ການຢ້ຽມຢາມເຮືອນຂອງແມ່ທີ່ຖືພາ ແລະ ໃຫ້ນົມລູກ. ຖືວ່າເປັນການແລກປ່ຽນບົດຮຽນ ທີ່ຕິດພັນກັບການປ່ຽນແປງພຶດຕິກຳກ່ຽວກັບການບໍລິໂພກອາຫານ ເຊິ່ງເປັນວຽກທີ່ທ້າທາຍ ທີ່ຕິດພັນກັບສະພາບ ແລະ ທ່າແຮງຂອງທ້ອງຖິ່ນ ສະນັ້ນ ເຄື່ອງມືໃນການສື່ສານ ຕ້ອງສາມາດເຂົ້າໃຈງ່າຍ ທັງພາສາຂອງທ້ອງຖິ່ນ ແລະ ພາສາທາງການ ພ້ອມກັບບັນດາເຄື່ອງມືອື່ນ ທີ່ເອື້ອອຳນວຍແກ່ກິດຈະກຳດັ່ງກ່າວໃຫ້ໄດ້ຮັບຜົນດີທີ່ສຸດ.

4) **ປະເມີນຄຸນນະພາບຂອງສິ່ງກໍ່ສ້າງທີ່ນຳໃຊ້ຮູບແບບຊຸມຊົນ ເປັນຜູ້ຈັດຕັ້ງປະຕິບັດເອງ ໂດຍນັກສຶກສາປີສຸດທ້າຍ ພາກວິຊາວິສະວະກຳໂຍທາ** ຊຶ່ງໄດ້ປະເມີນ 78 ຈາກທັງໝົດ 173 ໂຄງການຍ່ອຍ ທີ່ຕິດພັນກັບການປັບປຸງເສັ້ນທາງການເຂດການຜະລິດ 50 ເສັ້ນ, ຂົວ 2 ແຫ່ງ, ຊົນລະປະທານ ແລະ ຝາຍກັ້ນນ້ຳ 13 ແຫ່ງ, ແລະ ນ້ຳ 13 ກິດຈະກຳ. ໂດຍລວມແລ້ວ ສິ່ງກໍ່ສ້າງ ມີຄຸນນະພາບດີ ສະເລ່ຍບໍ່ຫຼຸດ 93% ແລະ ປະຊາຊົນມີຄວາມພໍໃຈໃນການຊົມໃຊ້, ປະຊາຊົນ ໄດ້ນຳໃຊ້ບັນດາໂຄງການຍ່ອຍເຂົ້າໃນການຜະລິດຂອງເຂົາເຈົ້າໄດ້ດີ ເຊັ່ນ: ນຳໃຊ້ເສັ້ນທາງບັນທຸກຜົນຜະລິດອອກສູ່ຕະຫຼາດ ເປັນການຫຼຸດເວລາໃນການເດີນທາງ ຫຼາຍກວ່າເຄິ່ງ ທຽບໃສ່ຜ່ານມາ ພ້ອມນັ້ນ, ບັນດາເສັ້ນທາງ ສາມາດຂົນສິ່ງຜົນຜະລິດເຂົ້າມາເກັບຮັກສາໄວ້ໃນບ້ານ ທີ່ປອດໄພກວ່າຜ່ານມາ ຮັບປະກັນຄວາມປອດໄພສະບຽງອາຫານ ໃນເວລາເກີດໄພພິບັດ ເຊັ່ນ: ນ້ຳຖ້ວມ, ໄຟໄໝ້ປ່າ ແລະ ອື່ນໆ.

ພ້ອມນັ້ນ, ໃນການປັບປຸງວຽກງານຊົນລະປະທານ ແລະ ຝາຍກັ້ນນ້ຳ ສາມາດສະໜອງນ້ຳໃຫ້ພື້ນທີ່ການຜະລິດ ເພີ່ມຂຶ້ນ 50,9% ແລະ ເປັນແຫ່ງນ້ຳທີ່ສາມາດນຳໃຊ້ໃນການລ້ຽງສັດ ແລະ ອື່ນໆ. ການສະໜອງລະບົບນ້ຳລິນ ແມ່ນເພື່ອນຳໃຊ້ໃນກິດຈະກຳຂອງວຽກງານໂພຊະນາການ ກໍຄືປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນບ້ານເປົ້າໝາຍ. ຢ່າງໃດກໍຕາມ, ການນຳໃຊ້ຮູບແບບຊາວບ້ານຈັດຕັ້ງປະຕິບັດເອງ ເປັນວຽກທີ່ທ້າທາຍ ທີ່ຕິດພັນກັບຄຸນນະພາບຂອງສິ່ງກໍ່ສ້າງ ທີ່ຈຳເປັນໃຫ້ວິຊາການຂອງ ທລຍ ແລະ ຂະແໜງການຂັ້ນເມືອງກ່ຽວຂ້ອງ ຕ້ອງໄດ້ລົງໄກ້ຊິດຕິດແທດ ແລະ ຊຸກຍູ້ ໂດຍສະເພາະໄລຍະການກໍ່ສ້າງບັນດາກິດຈະກຳຕ່າງໆ.

- ໄດ້ສືບຕໍ່ພັດທະນາລະບົບຕິດຕາມ ແລະ ປະເມີນຜົນໂຄງການ ທີ່ທັນສະໄໝ (www.prfmis.org) ໃນການເກັບກຳຂໍ້ມູນຈາກຂັ້ນບ້ານ ເພື່ອຮັບປະກັນວ່າ ງົບປະມານຖືກໂອນຫາຊາວບ້ານ ແລະ ໄດ້ຖືກນຳໃຊ້ ຕາມລະບຽບຂອງໂຄງການ ແລະ ຮັບປະກັນວ່າໂຄງການ ໄດ້ຮັບຜົນສຳເລັດຕາມເປົ້າໝາຍ ແລະ ຕົວຊີ້ວັດທີ່ກຳນົດໄວ້ ພ້ອມທັງນຳໃຊ້ເພື່ອການປະເມີນ ແລະ ຕີລາຄາຜົນໄດ້ຮັບຕ່າງໆ ຊຶ່ງໄດ້ຖືກປ້ອນຂໍ້ມູນຈາກພະນັກງານຂັ້ນບ້ານ ກວດກາ ແລະ ອະນຸມັດໂດຍທີມງານຂັ້ນເມືອງ ອອກສູ່ລະບົບຂອງຖານຂໍ້ມູນ ທີ່ທີມງານສູນກາງ ສາມາດຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດວຽກງານຕ່າງໆ ໃນແຕ່ລະອົງປະກອບຂອງໂຄງການ ພ້ອມທັງການນຳໃຊ້ງົບປະມານຕ່າງໆ.
- ໄດ້ພັດທະນາລະບົບເກັບກຳຄຳຄິດເຫັນ ແລະ ແກ້ໄຂຂໍ້ຂັດແຍ່ງ ເພື່ອເປັນການຮັບຟັງຄວາມຄິດເຫັນຂອງຊຸມຊົນໃນພື້ນທີ່ເປົ້າໝາຍ ກ່ຽວກັບການຊ່ວຍເຫຼືອຂອງໂຄງການ ໂດຍຊາວບ້ານສະມາດສະເໜີກ່ຽວກັບບັນຫາ ກໍຄືຜົນໄດ້ຮັບຕ່າງໆ ຢູ່ຂັ້ນບ້ານ, ຮັບປະກັນຄວາມສອດຄ່ອງ ແລະ ໂປ່ງໃສຢູ່ຂັ້ນຊຸມຊົນ.
- ສຳເລັດກອງປະຊຸມທົບທວນຄືນລະບົບຄຸ້ມຄອງຂ່າວສານຖານຂໍ້ມູນ (MIS) ຮ່ວມກັບທຸກຂະແໜງການ ຂອງ ທລຍ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ເພື່ອທຳຄວາມເຂົ້າໃຈລະອຽດ ແລະ ຄວາມເປັນເອກະພາບ ຂອງຂໍ້ມູນ.
- ສຳເລັດກະກຽມບົດລາຍງານສະບັບພາສາອັງກິດ ສະຫຼຸບວຽກງານ ທລຍ ແຕ່ປີ 2020 ຫາ ປີ 2022 ແລະ ແຜນວຽກແຕ່ປີ 2023 ຫາ 2025 ເພື່ອເປັນຂໍ້ມູນໃຫ້ຜູ້ໃຫ້ທຶນ ໃນການປະເມີນຜົນກາງສະໄໝ.
- ສຳເລັດບົດລາຍງານຜົນການຈັດຕັ້ງປະຕິບັດວຽກງານ ທລຍ ທີ່ນຳໃຊ້ທຶນຂອງອົງການພັດທະນາເພື່ອການຮ່ວມມືຂອງສະຫວິດເຊີແລນ (SDC) ແຕ່ປີ 2008 ຫາ 2021 ເພື່ອເປັນບ່ອນອີງໃຫ້ກັບອົງການດັ່ງກ່າວ ທີ່ໄດ້ປະກອບສ່ວນຊ່ວຍເຫຼືອວຽກງານພັດທະນາຊົນນະບົດໃນ ສປປ ລາວ ຜ່ານມາ.
- ປັບປຸງແຜນທີ່ 12 ເມືອງເປົ້າໝາຍຂອງ ໂຄງການ ທລຍ 3 ໄລຍະເພີ່ມທຶນ ທີ່ມີໂຄງການຍ່ອຍກໍ່ສ້າງໂຄງລ່າງພື້ນຖານໃນ 173 ບ້ານ ແລະ ສ້າງແຜນທີ່ ຂັ້ນແຂວງ ແຂວງອຸດົມໄຊ ແລະ ແຂວງຫົວພັນ ທີ່ສະແດງໃຫ້ເຫັນເມືອງເປົ້າໝາຍຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ.

### 1.2.6 ວຽກງານສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ

- ທລຍ ໄດ້ເອົາໃຈໃສ່ເຊື່ອມຊຶມແນວທາງຂອງລັດຖະບານ ທາງດ້ານການເມືອງ-ແນວຄິດ ແລະ ການຈັດຕັ້ງ ຢ່າງເປັນປົກກະຕິ ໂດຍ 1) ຈັດຕັ້ງເຜີຍເຊື່ອມຮູບແບບການຈັດຕັ້ງປະຕິບັດໂຄງການ ຕາມທິດ 3 ສ້າງ ໂດຍມອບໃຫ້ປະຊາຊົນຂັ້ນບ້ານ ເປັນເຈົ້າການຮັບຜິດຊອບໂຄງການ ໂດຍມີການເຂົ້າຮ່ວມຂອງທຸກຊັ້ນຄົນໃນສັງຄົມພາຍໃນບ້ານ ແລະ 2) ໄດ້ສ້າງຕັ້ງການຈັດຕັ້ງແລະ ກົນໄກການປະສານງານຂັ້ນບ້ານ ທີ່ຮັບຜິດຊອບໂດຍກົງຕໍ່ການບໍລິຫານຄຸ້ມຄອງໂຄງການ

ຍ່ອຍ, ການຄຸ້ມຄອງການເງິນ, ການຕິດຕາມກວດກາ, ການກະຈາຍຂໍ້ມູນຂ່າວສານ ແລະ ກົນໄກການແກ້ໄຂຂໍ້ຂັດແຍ່ງພາຍໃນບ້ານ.

- ວຽກງານພັດທະນາຂັ້ນບ້ານ ປະຊາຊົນໄດ້ເຂົ້າຮ່ວມວຽກງານການວາງແຜນຂັ້ນບ້ານ ເພື່ອປະກອບຄຳຄິດເຫັນ ກ່ຽວກັບຄວາມຕ້ອງການຂັ້ນບ້ານ, ເພດຍິງ ແລະ ຊົນເຜົ່າ ໄດ້ມີໂອກາດເຂົ້າຮ່ວມຫຼາຍ ເພາະເປັນເປົ້າໝາຍຜູ້ທີ່ຈະໄດ້ຮັບຜົນປະໂຫຍດໂດຍກົງ, ໄດ້ຮັບການປົກປ້ອງດ້ານສັງຄົມ ແລະ ສິ່ງແວດລ້ອມ ແລະ ຮັບປະກັນວ່າເຂົາເຈົ້າໄດ້ຮັບຜົນປະໂຫຍດສູງສຸດຈາກກິດຈະກຳຕ່າງໆ.
- ທລຍ ໄດ້ຮັບເອົາພະນັກງານທີ່ມາຈາກທ້ອງຖິ່ນ ຈຳນວນ 130 ຄົນ ປະຈຳຢູ່ຮາກຖານຂັ້ນບ້ານ ແລະ ນຳພາປະຊາຊົນເຮັດກິດຈະກຳຕ່າງໆ ເປັນຕົ້ນແມ່ນການວາງແຜນຂັ້ນບ້ານ, ການກໍ່ສ້າງ ແລະ ວຽກການປັບປຸງຊີວິດການເປັນຢູ່ ແລະ ສົ່ງເສີມດ້ານໂພຊະນາການ.
- ນອກຈາກນັ້ນ, ຍັງໄດ້ສ້າງນາຍຊ່າງຂັ້ນບ້ານ ຈຳນວນ 162 ຄົນ ທີ່ເປັນຜູ້ກໍ່ສ້າງໂຄງການຍ່ອຍໃນບ້ານເຂົາເຈົ້າເອງ ແລະ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ 1.040 ຄົນ ເປັນຍິງ 534 ຄົນ (51,3%) ປະກອບມີ ທີມງານການເງິນ, ທີມງານຈັດຊື້-ຈັດຈ້າງ ແລະ ທີມງານຕິດຕາມການກໍ່ສ້າງ ຢູ່ພາຍໃນບ້ານ.
- ຄະນະກຳມະການບໍລິຫານ ກຊກ (ຄບກ) ຢູ່ບ້ານເປົ້າໝາຍຊຸດທີ 1 ຈຳນວນ 1.355 ຄົນ, ເປັນຍິງ 1.083 ຄົນ (80%) ຈະເປັນຜູ້ສືບຕໍ່ວຽກງານ ຫຼັງຈາກໂຄງການສິ້ນສຸດ.
- ໄດ້ຝຶກອົບຮົມໃຫ້ທີມງານຈັດຕັ້ງປະຕິບັດຂັ້ນບ້ານ 1.035 ຄົນ, ຍິງ 531 ຄົນ (51.30%) ຊຶ່ງທີມງານດັ່ງກ່າວ ຈະສາມາດຊ່ວຍໃນການກວດກາ ແລະ ຕິດຕາມວຽກງານການກໍ່ສ້າງພາກສະໜາມ.
- ປະສານງານ ກັບ ຂະແໜງການຕ່າງໆຂອງ ທລຍ ກ່ຽວກັບ ການສ້າງເຄື່ອງມື IEC ອອກມາຮັບໃຊ້ໃນໂຊງເຂດວຽກງານສ້າງຄວາມເຂັ້ມແຂງ.
- ສຳເລັດກະກຽມຈັດຝຶກອົບຮົມການເປັນຜູ້ນຳ (Community Leadership Training) ໃຫ້ອົງການຈັດຕັ້ງຂັ້ນບ້ານ, ອົງການຈັດຕັ້ງມະຫາຊົນ ແລະ ຄະນະຄຸ້ມຄອງບໍລິຫານກຸ່ມຊ່ວຍເຫຼືອກັນ ໂດຍຈະເລີ່ມທົດລອງເອົາຈາກບ້ານເປົ້າໝາຍຢູ່ເມືອງຫຼາ-ນາໝໍ້, ແຂວງອຸດົມໄຊ ມາຝຶກຢູ່ສູນຝຶກອົບຮົມຮ່ວມມືລາວ-ເກົາຫຼີ, ກະຊວງກະສິກຳ ແລະ ປ່າໄມ້.
- ສະເພາະຂະແໜງການກ່ຽວຂ້ອງຂັ້ນເມືອງ ເປັນຕົ້ນແມ່ນ ກະສິກຳ ແລະ ປ່າໄມ້ເມືອງ ໄດ້ເຂົ້າຮ່ວມກິດຈະກຳຮ່ວມກັບທີມງານ ທລຍ ແລະ ຊ່ວຍຊຸກຍູ້ດ້ານວິຊາການ ໃຫ້ແກ່ທີມງານ ທລຍ ແລະ ຊາວບ້ານ ເປັນປົກກະຕິ.

### 1.3 ການຮ່ວມມື ແລະ ປະສານງານ

- ທລຍ ເປັນອົງການຈັດຕັ້ງໜຶ່ງທີ່ເປັນຫົວໜ່ວຍວິຊາການ ຂັ້ນ 2 ຂອງກະຊວງກະສິກຳ ແລະ ປ່າໄມ້, ດັ່ງນັ້ນ ທລຍ ໄດ້ມີການປະສານສົມທົບ, ຮ່ວມມື ກັບກົມທີ່ກ່ຽວຂ້ອງ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ ໃຫ້ການນຳກະຊວງ ຮັບຊາບເປັນປົກກະຕິ. ນອກຈາກນັ້ນ, ຢູ່ຂັ້ນທ້ອງຖິ່ນ ກໍຍັງໄດ້ປະສານສົມທົບ ແລະ ລາຍງານ ໃຫ້ແກ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ແລະ ການນຳຂັ້ນແຂວງ ທີ່ໂຄງການ ທລຍ ຈັດຕັ້ງປະຕິບັດຢູ່.
- ໄດ້ມີການປະສານສົມທົບກັບບັນດາໂຄງການ ພາຍໃຕ້ແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອປັບປຸງວຽກງານໂພຊະນາການຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ ເປັນປົກກະຕິ ເພື່ອລາຍງານຄວາມຄືບໜ້າ, ແລກປ່ຽນບົດຮຽນ ແລະ ການຖອດຖອນບົດຮຽນຕ່າງໆ ຊຶ່ງໃນ 06 ເດືອນຜ່ານມາ ແມ່ນໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ 2022 ແລະ ກອງປະຊຸມປະຈຳໄຕມາດ 1/2023.
- ເປັນໃຈກາງປະສານສົມທົບ ແລະ ເຮັດວຽກຮ່ວມກັບທະນາຄານນະໂຍບາຍ, ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ແລະ ກົມພັດທະນາຊົນນະບົດ ໃນການທົດລອງຈັດຕັ້ງປະຕິບັດວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ໃຫ້ສະມາຊິກກຸ່ມຜະລິດ ຢູ່ເຂດເປົ້າໝາຍຂອງໂຄງການ ທລຍ ຢູ່ແຂວງອຸດົມໄຊ ທີ່ໄດ້ສ້າງ 14 ກຸ່ມຜູ້ຜະລິດ ປະກອບມີ 4 ກຸ່ມ ຫັດຖະກຳຕໍ່າແຜນ ແລະ 10 ກຸ່ມລ້ຽງສັດ ຊຶ່ງໄດ້ຮັບທຶນກູ້ຈາກທະນາຄານນະໂຍ

ບາຍ ພາຍໃຕ້ຂອບຮ່ວມມືດັ່ງກ່າວ ແລະ ຈຳນວນກຸ່ມຜະລິດທັງໝົດ ກຳລັງດຳເນີນກິດຈະກຳຂອງພວກເຂົາເຈົ້າ ແລະ ໄດ້ເລີ່ມສົ່ງເງິນດອກເບ້ຍຕາມກຳນົດການໄດ້ຢ່າງເປັນປົກກະຕິ.

- ໄດ້ມີການປະສານສົມທົບກັບບັນດາຜູ້ໃຫ້ທຶນ ເພື່ອປຶກສາຫາລື, ທົບທວນວຽກງານ ແລະ ຕີລາຄາຜົນໄດ້ຮັບຕ່າງໆ ເປັນປົກກະຕິ.

### 1.4 ການກະກຽມໂຄງການໃໝ່ (CLEAR)

ໂຄງການ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຫຼື CLEAR ປະກອບດ້ວຍ 5 ອົງປະກອບ ຄື: 1) ການພັດທະນາເສດຖະກິດທ້ອງຖິ່ນ, ປັບປຸງໂຄງລ່າງ ແລະ ສ້າງຄວາມເຂັ້ມແຂງ; 2) ການສ້າງຄວາມອາສາມາດໃນວຽກງານປັງປຸງຊີວິດການເປັນຢູ່; 3) ການສົ່ງເສີມການເຂົ້າເຖິງໂພຊະນາການຂອງຊຸມຊົນ; 4) ວຽກງານຄຸ້ມຄອງບໍລິຫານ, ການສ້າງຄວາມເຂັ້ມແຂງ, ຕິດຕາມ ແລະປະເມີນຜົນ; ແລະ 5) ນະໂຍບາຍການແກ້ໄຂໄພພິບັດສຸກເສີນ ໃນມູນຄ່າທັງໝົດ 45 ລ້ານໂດລາສະຫາລັດ ແລະ ຈັດຕັ້ງປະຕິບັດໃນໄລຍະ 4 ປີ ນັບແຕ່ທ້າຍປີ 2023 ເຖິງປີ 2027. ໃນ 06 ເດືອນຕົ້ນປີ 2023 ມີຫຼາຍໜ້າວຽກຂອງການກະກຽມໂຄງການດັ່ງກ່າວທີ່ໄດ້ເຮັດສຳເລັດ ເປັນຕົ້ນແມ່ນ:

- ໄດ້ເຮັດວຽກຮ່ວມກັບທີມງານຊ່ຽວຊານຂອງທະນາຄານໂລກ, ປຶກສາຫາລືຮ່ວມກັບພາກສ່ວນກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ຢ້ຽມຢາມພື້ນທີ່ຕົວຈິງຢູ່ ບ້ານເປົ້າໝາຍ ແລະ ກິດຈະກຳຕ່າງໆ ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ທີ່ກຳລັງຈັດຕັ້ງປະຕິບັດຢູ່ ເພື່ອຖອດຖອນບົດຮຽນ ແລະ ເປັນແນວທາງສຳລັບກຳນົດກິດຈະກຳຂອງໂຄງການໃໝ່ດັ່ງກ່າວ.
- ສຳເລັດການກະກຽມເອກະສານທີ່ສຳຄັນ ຄື: ເອກະສານໂຄງການ, ຂອບການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ, ຂໍ້ຕົກລົງ ແລະ ສັນຍາລະຫວ່າງລັດຖະບານ ແລະ ຜູ້ໃຫ້ທຶນ ກ່ອນເຊັນສັນຍາຢ່າງເປັນທາງການ.
- ສຳເລັດການຄັດເລືອກພື້ນທີ່ເປົ້າໝາຍໂຄງການ ຂັ້ນແຂວງ ແລະ ຂັ້ນເມືອງ ໂດຍອີງໃສ່ຂໍ້ມູນຂອງ 348/ລບ, ຂໍ້ມູນຈາກສະຖິຕິແຫ່ງຊາດ ແລະ ຂໍ້ມູນການຊົມໃຊ້, ຂໍ້ມູນດ້ານໄພພິບັດ, ອັດຕາການຂາດສານອາຫານ ແລະ ການພິຈາລະນາກ່ຽວກັບຄ່າບໍລິຫານໃນການລົງຕິດຕາມວຽກງານ ຊຶ່ງໄດ້ກຳນົດພື້ນທີ່ເປົ້າໝາຍຂອງໂຄງການຢູ່ 7 ແຂວງ 14 ເມືອງ ຄື: ເມືອງຜົ້ງສາລີ ແລະ ເມືອງຍອດອູ ຂອງແຂວງຜົ້ງສາລີ, ເມືອງງາ ແລະ ເມືອງປາກແບ່ງ ຂອງແຂວງອຸດົມໄຊ; ເມືອງແອັດ ແລະ ເມືອງກວັນ ຂອງແຂວງຫົວພັນ; ເມືອງໜອງແຮດ ແລະ ເມືອງພູກູດ ຂອງແຂວງຊຽງຂວາງ; ເມືອງນອງ ແລະ ເມືອງເຊໂປນ ຂອງແຂວງສະວັນນະເຂດ; ເມືອງຕະໂອ້ຍ ແລະ ເມືອງສະໝ້ວຍ ຂອງແຂວງສາລະວັນ; ເມືອງດາກຈຶງ ແລະ ເມືອງກະລຶມ ຂອງແຂວງເຊກອງ. ສຳລັບການຄັດເລືອກບ້ານ ແມ່ນຈະຄັດເລືອກເອົາ 30 ບ້ານ ຕໍ່ເມືອງ ຊຶ່ງເປັນບ້ານທີ່ທຸກຍາກ, ມີອັດຕາເດັກຂາດສານອາຫານສູງ ແລະ ມີຄວາມສ່ຽງດ້ານໄພພິບັດ ແລະ ບໍ່ຊໍ້າກັນກັບໂຄງການກະສິກຳເພື່ອໂພຊະນາການ 2 (AFN) ຂອງກະຊວງກະສິກຳ ແລະ ປ່າໄມ້.

### 1.5 ຕີລາຄາດ້ານດີ, ຂໍ້ຄົງຄ້າງ ແລະ ບົດຮຽນຖອດຖອນໄດ້

#### 1.5.1 ດ້ານດີ

- ອົງການປົກຄອງ ແລະ ຊຸມຊົນ ທ້ອງຖິ່ນ ໃຫ້ຄວາມສົນໃຈ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດ ກິດຈະກຳຕ່າງໆຂອງໂຄງການເປັນຢ່າງດີ.
- ການສຸມກຳລັງ ແລະ ງົບປະມານ ສຳລັບຈັດຕັ້ງປະຕິບັດກິດຈະກຳ ຢູ່ພື້ນທີ່ດຽວກັນຂອງຫຼາຍໂຄງການ ພາຍໃຕ້ແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ຊ່ວຍໃຫ້ມີການແລກປ່ຽນ ຫຼື ນຳໃຊ້ຂໍ້ມູນຊຸດດຽວກັນ.
- ໂຄງການ ທລຍ 3 ໄລຍະເພີ່ມທຶນ ມີພະນັກງານຂັ້ນບ້ານ ປະຈຸບັນມີ 130 ຄົນ ເຮັດໜ້າທີ່ຊຸກຍູ້ ແລະ ໃກ້ຊິດ ຕິດແທດກັບອຳນາດການປົກຄອງບ້ານ ແລະ ປະຊາຊົນ ຢູ່ບັນດາບ້ານເປົ້າໝາຍ.
- ໄດ້ສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງຢູ່ຂັ້ນຊຸມຊົນ ຄື ຄະນະບໍລິຫານ ກຊກ ຂັ້ນບ້ານ ເພື່ອເປັນຜູ້ສືບທອດວຽກງານ ໃນການພັດທະນາຢູ່ບ້ານຂອງເຂົາເຈົ້າເອງ ໃນຕໍ່ໜ້າ.

### 1.5.2 ຂໍ້ຄົງຄ້າງ

- ບາງບ້ານເປົ້າໝາຍ ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ ບໍ່ມີໄຟຟ້າ ແລະ ບໍ່ມີສັນຍານໂທລະສັບ ເຮັດໃຫ້ຫຍຸ້ງຍາກໃນການຈັດກິດຈະກຳສົ່ງເສີມດ້ານໂພຊະນາການ.
- ການລະບາດຂອງພະຍາດໂຄວິດ-19 ໃນປີ 2020-2021 ເຮັດໃຫ້ການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ບໍ່ເປັນໄປຕາມແຜນການ ສົ່ງຜົນໃຫ້ບາງກິດຈະກຳ ແກ່ຍາວລ້າຊ້າມາຮອດປີ 2022.
- ໄພພິບັດທີ່ເກີດຂຶ້ນໃນຊ່ວງລະດູຝົນ ປີ 2022 ເຮັດໃຫ້ຫຼາຍກິດຈະກຳຂອງ ທລຍ ໄດ້ຮັບຜົນກະທົບ ເປັນຕົ້ນແມ່ນກິດຈະກຳການກໍ່ສ້າງພື້ນຖານໂຄງລ່າງ ຢູ່ບາງເມືອງ ໄດ້ຮັບຄວາມເສຍຫາຍ ແລະ ຕ້ອງໄດ້ມີການທົບທວນ ບູລິມະສິດຄືນໃໝ່ ເຮັດໃຫ້ວຽກມີຄວາມລ້າຊ້າ.
- ການຫຼຸດຄ່າຂອງເງິນກີບ ແລະ ສະພາບເງິນເຟີ້ ໃນປີ 2022 ເຮັດໃຫ້ມີຜົນກະທົບໂດຍກົງຕໍ່ກັບການຈັດຕັ້ງປະຕິບັດວຽກງານ ໂດຍສະເພາະຄ່າວັດສະດຸການກໍ່ສ້າງ ໄດ້ເພີ່ມຂຶ້ນ ເຮັດໃຫ້ການກໍ່ສ້າງບາງໂຄງການ ບໍ່ສຳເລັດຕາມແຜນການທີ່ກຳນົດໄວ້ ແລະ ຕົ້ນທຶນການຜະລິດກະສິກຳ ທີ່ເພີ່ມຂຶ້ນ ເຮັດໃຫ້ສະມາຊິກ ກຸ່ມຊ່ວຍເຫຼືອກັນ ແລະ ກຸ່ມຜະລິດຈຳນວນໜຶ່ງ ບໍ່ກ້າກູ້ຢືມເງິນ ເພື່ອລົງທຶນໃສ່ການຜະລິດ ເພາະຢ້ານຂາດທຶນ ແລະ ບໍ່ສາມາດສົ່ງເງິນຄືນໄດ້.
- ຄວາມເປັນເອກະພາບຂອງບັນດາໂຄງການ ພາຍໃຕ້ແຜນງານໜຶ່ງດຽວທີ່ມີຫຼາຍໂຄງການຈັດຕັ້ງປະຕິບັດ ຍັງເປັນວຽກງານທີ່ຕ້ອງໄດ້ຮັບການປັບປຸງ ແລະ ຮັບປະກັນສິດຜົນປະໂຫຍດສູງສຸດໃຫ້ກັບປະຊາຊົນ.

### 1.5.3 ບົດຮຽນຖອດຖອນໄດ້

- ການຈັດຕັ້ງປະຕິບັດວຽກງານ ເມື່ອເບິ່ງໃສ່ກັບຄວາມຮຽກຮ້ອງຕ້ອງການຂອງທ້ອງຖິ່ນ ໃນການແກ້ໄຂຄວາມ ທຸກຍາກຂອງປະຊາຊົນບັນດາເຜົ່າແລ້ວ ເຫັນວ່າ ຍັງມີຫຼາຍໜ້າວຽກທີ່ຕ້ອງໄດ້ສືບຕໍ່ຂົນຂວາຍການສະໜັບສະໜູນທາງດ້ານທຶນຮອນ ທັງພາຍໃນ ແລະ ຕ່າງປະເທດ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານແກ້ໄຂຄວາມທຸກຍາກ ຕາມເຂດພັດທະນາຊົນນະບົດໃໝ່ ໃນພື້ນທີ່ຊົນນະບົດຫ່າງໄກສອກ ຫຼີກ ໃຫ້ກວ້າງຂວາງກ່ວາເກົ່າ.
- ສຳລັບບັນດາໂຄງການທີ່ນອນໃນແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ຕ້ອງຮັບປະກັນວ່າ ມີຄວາມເປັນເອກະພາບດ້ານຂໍ້ມູນທີ່ນຳໃຊ້ໃນໂຄງການ, ດ້ານຕົວຊີ້ວັດຂອງໂຄງການ, ການປະສານງານ ແລະ ຄວາມເຂົ້າໃຈຂອງປະຊາຊົນທີ່ເຂົ້າຮ່ວມໂຄງການ ເພື່ອຫຼີກລ້ຽງການສົມທຽບການເຂົ້າຮ່ວມກິດຈະກຳຂອງໂຄງການ.
- ການນຳໃຊ້ຮູບແບບຊຸມຊົນເປັນຜູ້ຈັດຕັ້ງປະຕິບັດເອງ ໂດຍການໂອນງົບປະມານໂດຍກົງໃຫ້ຊາວບ້ານ ຈັດຕັ້ງປະຕິບັດກິດຈະກຳ ຍັງພົບຄວາມຫຍຸ້ງຍາກ ເພາະບໍ່ເປັນໄປຕາມລະບຽບການຂອງກະຊວງການເງິນ ດັ່ງນັ້ນ ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ອອກຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ ກອງທຶນຫຼຸດຜ່ອນຄວາມທຸກຍາກ ຈັດຕັ້ງປະຕິບັດໂຄງ ການຕາມຮູບແບບຊຸມຊົນປະຕິບັດເອງ ເພື່ອສົ່ງເຖິງກະຊວງການເງິນ.
- ການສ້າງຄວາມເປັນເຈົ້າ ແລະ ມອບຄວາມຮັບຜິດຊອບ ໃຫ້ແກ່ຊຸມຊົນ ແລະ ຂະແໜງການກ່ຽວຂ້ອງຂັ້ນເມືອງ ຈະຊ່ວຍໃຫ້ເກີດມີຄວາມຍືນຍົງ.
- ການພັດທະນາທີ່ອີງໃສ່ທ່າແຮງຂອງທ້ອງຖິ່ນ ແລະ ຄົນຂອງທ້ອງຖິ່ນ ຖືວ່າໄດ້ຮັບຜົນດີ ແລະ ຮັບປະກັນຄວາມຍືນຍົງຂອງກິດຈະກຳ.

## ພາກທີ II
## ທິດທາງແຜນການ 06 ເດືອນທ້າຍປີ 2023

### 2.1 ການຈັດຕັ້ງປະຕິບັດ ໂຄງການ ທລຍ 3 ໄລຍະເພີ່ມທຶນ

- ຈັດຕັ້ງປະຕິບັດໜ້າວຽກຕ່າງໆ ໃນບ້ານເປົ້າໝາຍຊຸດ 2 ຈຳນວນ 237 ບ້ານ ໃນ 12 ເມືອງ 4 ແຂວງເປົ້າໝາຍ ຂອງໂຄງການ ທລຍ 3 ໄລຍະເພີ່ມທຶນ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ແລະ ຊຽງຂວາງ) ເປັນຕົ້ນແມ່ນ ວຽກງານການກໍ່ສ້າງພື້ນຖານໂຄງລ່າງຂັ້ນຊຸມຊົນ, ວຽກງານປັບປຸງຊີວິດການເປັນຢູ່, ວຽກງານສົ່ງເສີມໂພຊະນາການ, ວຽກງານສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ.

### 2.2 ການກະກຽມ ແລະ ຈັດຕັ້ງປະຕິບັດ ໂຄງການ CLEAR

- ສືບຕໍ່ກະກຽມການຈັດຕັ້ງປະຕິບັດໂຄງການ CLEAR ຢູ່ 14 ເມືອງ 7 ແຂວງເປົ້າໝາຍ ເປັນຕົ້ນແມ່ນ ການກະກຽມຄວາມພ້ອມດ້ານຈັດຊື້-ຈັດຈ້າງ ພະນັກງານໂຄງການ ທີ່ຈະປະຈໍາຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ກະກຽມແຜນຈັດຕັ້ງປະຕິບັດໂຄງການ ພ້ອມດ້ວຍງົບປະມານ ປະຈໍາປີ 2023-2024.
- ຈັດຝຶກອົບຮົມ ຂອບການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ໃຫ້ກັບພະນັກງານໂຄງການ CLEAR ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

### 2.3 ການຮ່ວມມື ແລະ ປະສານງານ

- ສືບຕໍ່ປະສານສົມທົບ, ຮ່ວມມື ກັບກົມທີ່ກ່ຽວຂ້ອງ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງ ທລຍ ໃຫ້ການນໍາກະຊວງກະສິກໍາ ແລະ ປ່າໄມ້ ຮັບຊາບ. ນອກຈາກນັ້ນ, ຢູ່ຂັ້ນທ້ອງຖິ່ນ ກໍຍັງຈະປະສານສົມທົບ ແລະ ລາຍງານ ໃຫ້ແກ່ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ແລະ ການນໍາຂັ້ນແຂວງ ທີ່ໂຄງການ ທລຍ ຈັດຕັ້ງປະຕິບັດຢູ່.
- ສືບຕໍ່ປະສານສົມທົບກັບບັນດາໂຄງການ ພາຍໃຕ້ແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອປັບປຸງວຽກງານໂພຊະນາການຢູ່ 4 ແຂວງພາກເໜືອ ຂອງ ສປປ ລາວ ແລະ ເຂົ້າຮ່ວມກອງປະຊຸມປະຈໍາໄຕມາດ 3/2023 ແລະ ກອງປະຊຸມປະຈໍາປີ 2023 ເພື່ອລາຍງານຄວາມຄືບໜ້າ ແລະ ແລກປ່ຽນບົດຮຽນ.
- ສືບຕໍ່ເປັນໃຈກາງປະສານສົມທົບ ແລະ ເຮັດວຽກຮ່ວມກັບທະນາຄານນະໂຍບາຍ, ກົມສົ່ງເສີມກະສິກໍາ ແລະ ສະຫະກອນ, ແລະ ກົມພັດທະນາຊົນນະບົດ ໃນການທົດລອງຈັດຕັ້ງປະຕິບັດວຽກງານສະໜອງສິນເຊື່ອ 4 ຮ່ວມ ເພື່ອແກ້ໄຂຄວາມທຸກຍາກ ໃຫ້ສະມາຊິກກຸ່ມຜະລິດ ຢູ່ເຂດເປົ້າໝາຍຂອງໂຄງການ ທລຍ ຢູ່ແຂວງອຸດົມໄຊ ແລະ ແຂວງເປົ້າໝາຍອື່ນໆ.
- ສືບຕໍ່ປະສານສົມທົບກັບບັນດາຜູ້ໃຫ້ທຶນ ເພື່ອປຶກສາຫາລື, ທົບທວນວຽກງານ ແລະ ຕີລາຄາຜົນໄດ້ຮັບຕ່າງໆ ພ້ອມທັງຂົນຂວາຍລະດົມທຶນ ເພື່ອປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ ສປປ ລາວ.

**ຜູ້ອໍານວຍການ ກອງທຶນຫຼຸດຜ່ອນຄວາມທຸກຍາກ**

**.. ພັດນະຄອນ ຄັນທະມີໄຊ**

ບ່ອນສົ່ງ:

1. ຫົວໜ້າຫ້ອງການກະຊວງ 1 ສະບັບ
2. ພະແນກເລຂານຸການ ແລະ ສັງລວມ, ຫ້ອງການກະຊວງ 1 ສະບັບ
3. ຫົວໜ້າກົມແຜນການ ແລະ ການຮ່ວມມື 1 ສະບັບ
4. ພະແນກແຜນການ, ກົມແຜນການ ແລະ ການຮ່ວມມື 1 ສະບັບ
5. ເກັບຮັກສາໄວ້ 1 ສະບັບ